ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສໍາພັນ, ຫ້ອງການ ທຫລ
ໂທ/ແຟັກ 856 21 213109, 213110

# ຂໍ່ານັບຮັບຕ້ອນວັນສ້າງຕັ້ງ ທະນາຄານແຫ່ງ ສປປ ລາວ ຄົບຮອບ 56 ປີ (07 ຕຸລາ 1968 - 07 ຕຸລາ 2024)



ເພື່ອເປັນການສ້າງຂະບວນການ ຂໍ່ານັບຮັບຕ້ອນວັນສ້າງຕັ້ງ ທະນາຄານແຫ່ງ ສປປ ລາວ (ທຫລ) ຄົບຮອບ 56 ປີ (07 ຕຸລາ 1968-07 ຕຸລາ 2024) ທີ່ຈະມາເຖິງນີ້, ໃນວັນທີ 28 ກັນຍາ 2024 ຊຶ່ງນໍາພາໂດຍ ທ່ານ ນ. ວັດທະນາ ດາລາລອຍ ຮັກສາການ ເລຂາ ຄະນະບໍລິຫານງານພັກ, ຮັກສາການ ຜູ້ວ່າການ ທຫລ ໄດ້ຈັດຕັ້ງສ້າງຂະບວນການອອກແຮງງານລວມໝູ່ ແລະ ລະດົມວັດຖຸ-ປັດໄຈ ເພື່ອນໍາໄປຊ່ວຍເຫຼືອປະຊາຊົນ ທີ່ໄດ້ຮັບຜົນກະທົບຈາກໄພພິບັດນໍ້າຖ້ວມຢູ່ບັນດາແຂວງໃນຂອບເຂດທົ່ວປະເທດ. ການສ້າງຂະບວນການໃນຄັ້ງນີ້ ໄດ້ມີກໍາມະການຄະນະພັກ ທຫລ, ບັນດາຄະນະໜ່ວຍພັກ-ຄະນະກົມ ແລະ ສະມາຊິກ 3 ອົງການຈັດຕັ້ງມະຫາຊົນ ຂອງ ທຫລ ເຂົ້າຮ່ວມຫຼາຍກວ່າ 200 ຄົນ. ຈຸດປະສົງຂອງການສ້າງຂະບວນການໃນຄັ້ງນີ້ ມີ 02 ເນື້ອໃນສໍາຄັນຕົ້ນຕໍ ຄື: 1. ຂະບວນການອອກແຮງງານລວມໝູ່ ພາຍໃນສໍານັກງານ-ອົງການ ເພື່ອທໍາຄວາມສະອາດ ແລະ ມ້ຽນມັດສິ່ງກີດຂວາງຕ່າງໆ ໃນຊ່ວງເວລາທີ່ມີການປ້ອງກັນ ແລະ ເຝົ້າລະວັງນໍ້າຖ້ວມ ໃນຊ່ວງກາງເດືອນກັນຍາ 2024, ແລະ 2. ຂະບວນການລະດົມວັດຖຸ-ປັດໄຈ ເພື່ອນໍາໄປຊ່ວຍເຫຼືອບັນດາເປົ້າໝາຍ ທີ່ໄດ້ຮັບຜົນກະທົບຈາກໄພພິບັດນໍ້າຖ້ວມໃນໄລຍະຜ່ານມາ ກໍ່ຄືໃນປະຈຸບັນ ຊຶ່ງກ່ອນໜ້ານີ້ ການຈັດຕັ້ງຂອງຂະແໜງທະນາຄານ ໂດຍສະເພາະ ທຫລ ໄດ້ປະກອບສ່ວນໄປແລ້ວໃນເບື້ອງຕົ້ນເປັນມູນຄ່າ 615,000,000 ກີບ ກໍ່ຕາມ.

ນອກຈາກການຈັດຕັ້ງຂະບວນການໃນຄັ້ງນີ້ແລ້ວ, ໃນວັນທີ 07 ຕຸລາ 2024 ກໍ່ຍັງຈະມີຈັດຕັ້ງຂະບວນການຕ່າງໆຕື່ມອີກ ໂດຍສະເພາະແມ່ນ ຂະບວນການ ຈັດຕັ້ງປະຕິບັດວຽກງານວິຊາສະເພາະ, ການຈັດສໍາມະນາວິຊາການ ທີ່ຕິດພັນກັບຂະແໜງທະນາຄານ ແລະ ກິດຈະກໍາກິລາຈໍານວນໜຶ່ງຕື່ມອີກ ເພື່ອຂໍ່ານັບຮັບຕ້ອນວັນສ້າງຕັ້ງ ທຫລ ຄົບຮອບ 56 ປີ ໃຫ້ມີບັນຍາກາດທີ່ຟົດຟື້ນ ແລະ ຕໍ່ເນື່ອງ, ທັງເປັນການຂໍ່ານັບຮັບຕ້ອນການກະກຽມ ແລະ ດໍາເນີນກອງປະຊຸມໃຫຍ່ຂອງບັນດາຮາກຖານພັກ ຢູ່ອົງຄະນະພັກ ທຫລ ທີ່ຈະມີຂຶ້ນໃນຕໍ່ໜ້ານີ້.









ຊາດພັດທະນາ ພາເສດຖະກິດກ້າວໄກ ພ້ອມກັນນຳໃຊ້ເງິນກີບ